ມິຕພາບທະຫານລາວ ຣາຍງານພິທີໄຫວ້ອາລັຍ ວັນກຳເນີດຂອງ

# ກອງທັບແຫ່ງຊາດລາວ

France – 12 Avril 2006

N° 2 BIS

## ນາຍທະຫານ ທີ່ຖືກຂ້າຕາຍຢູ່ສູນສັມມາ

ຍ້ອນ ຮັກຄວາມເປັນລາວ, ຮັກສັນຕິພາບ ແລະ ຮັກຄວາມຖືກຕ້ອງປອງດອງຊາດ ຣະຫວ່າງລາວຕໍ່ລາວ, ນາຍແລະພົນທະຫານ ທີ່ມີຊື່ຢູ່ຂ້າງລຸ່ມນີ້ ໄດ້ຖິ້ມຊີວິດຂອງຕົນໄວ້ທີ່ສູນສັມມາ ແທນທີ່ຈະຕາຍຢູ່ສມໍຣະພູມສນາມຣົບ ເໝືອນກັນກັບທະຫານຕ່າງໆ ໃນໂລກ. ທະຫານຫຼາຍຄົນ ໄດ້ຈາກຄອບຄົວໄປ ຢ່າງບໍ່ໄດ້ສັ່ງລູກສັ່ງເມັຽແມ້ແຕ່ພຽງໝ້ອຍດຽວ ແລະ ໄດ້ປະປ່ອຍໃຫ້ລູກທຸກຄົນໃນຄອບຄົວກາຍເປັນກຳພ້າພໍ່ກຳພ້າແມ່. ນີ້ຄື ຜົນງານຂອງສັນຍາ ກ່ຽວກັບການຖືກຕ້ອງປອງດອງຊາດ.

ວັນທີ ໑໕ ມີນານີ້, ພວກຂ້າພະເຈົ້າ ໃນນາມຄົນລາວ ແລະຍາຕິພີ່ນ້ອງພ້ອມດ້ວຍລູກເຕົ້າ ຂໍກົມຫານ ເພື່ອອຸທິດບຸນກຸສົນ ແດ່ດວງວິນຍານຂອງ ທຸກໆທ່ານທີ່ໄດ້ສລະຊີວິດແລະເລືອດເນື້ອໃນການຕໍ່ສູ້ສັດຕຣູຂອງປະເທດຊາດ ເພື່ອໃຫ້ຄົນລາວທຸກຄົນ ໄດ້ຢູ່ໃນຄວາມຕລອດປອດໄພແລະຢູ່ໃນ ຄວາມພາກພູມໃຈ ຈົນມາເຖິງທຸກວັນນີ້.

ຂໍໃຫ້ປະເທດລາວ ພ້ອມດ້ວຍດິນດອນຕ່ອນຫຍ້າທຸກໆຕອນ ຈົ່ງຍັງຄົງເຫຼືອຢູ່ເປັນຂອງຄົນລາວ ຕລອດກາລະນານເທີນ. ຄົນລາວ ຄວນມີສະຕິ.

- ພົນຕຣີ ຜາສຸກ ສໍຣາຊພັກ (ສູນສົບຮາວ)
- ທ່ານ ພັນເອກ ບຸນທົດ ຫຼຽວານິສວົງສ໌
- ທ່ານ ນາຍພົນໂທ ບຸນປອນ ມາກເທພຣັກ, ຜູ້ບັນຊາການທະຫານສູງສຸດແຫ່ງຊາດ, ຖືກຂ້າແບບໂຫດຮ້າຍແສນທໍຣະມານ ຢູ່ສູນ ສົບຮາວ
- ພົນຈັຕວາ ໜູເພັຊຣ໌ ດາວເຮືອງ (ສູນສົບຮາວ)
- ທ່ານ ພັນເອກ ສົມຈັນ ບຸນພິໄສ
- ທ່ານ ນາຍພົນຕຣີ ອ້ວນ ຣາທິກຸນ
- ທ່ານ ພັນເອກ ຯລຯ

## ຮູ້ແລ້ວເຖົ້າ ເຂົ້າໃຈແລ້ວຕາຍ

## ມາແລ້ວຂ້າຄວາຍເຖິກ ເສິກແລ້ວຂ້າຄົນຫານ

ຄນະກັມການແລະໝູ່ເພື່ອນຄົນລາວຮ່ວມຊາດ ພ້ອມດ້ວຍສະມາຊິກທັງຫຼາຍ ໄດ້ພາກັນໄຫວ້ອາລັຍ ແດ່ດວງວິນຍານຂອງພົນແລະນາຍທະຫານ ທີ່ຖືກກຳລັງແນວລາວຮັກຊາດ ຂ້າຕາຍຢູ່ສູນສັມມາ ແລະຖືກລົ້ມຕາຍໃນສນາມຣົບ ໃນການຕໍ່ຕ້ານການຣຸກຮານຂອງແກວທີ່ຫວັງດັບຄົນລາວ ເພື່ອຍຶດເອົາປະເທດລາວໄປເປັນຂອງມັນ. ຫຼັງຈາກພິທີຕັກບາດຕາມຮີດຄອງປະເພນີ ພວກພີ່ນ້ອງລາວທັງຫຼາຍໄດ້ພາກັນ ສົນທະນາ, ມ່ວນຊື່ນ, ເບິ່ງຮູບຖ່າຍໃນອະດີດ, ເບິ່ງພາພຍົນ ແລະ ກິນເຂົ້າຮ່ວມພາກັນປາຮ່ວມຕ່ອນ. ນອກຈາກນີ້ ຍັງມີຣາຍການພິເສດ ຄືການຂັບຣົດສາມັກຄີ ຕະລຸຍຕົມຂຶ້ນໂມນແຂ່ງກັນ ຈົນຮອດ ໕ ໂມງແລງຈິ່ງໄດ້ຈົບລົງດ້ວຍຄວາມດີອົກດີໃຈ. "ປີນີ້ບໍ່ມີອ້າຍບ່າວຈັກຄົນເລີຍ ມີແຕ່ຜູ້ມີລູກມີເມັຽແລ້ວ" ສຽງຫວານໆຂອງໄທເມືອງຫຼວງດັງອອກຈາກປາກຍິງສາວຜູ້ນຶ່ງ, ອາຍຸ ປະມານ ໒໐ ຫຼື ໒໒ ປີ. "ເທື່ອໜ້າ ມາເບິ່ງໃໝ່" ນາງຍໍ້າຕື່ມອີກ.

ໄດ້ໄປຮ່ວມເທື່ອນີ້ມີຄື ນາຍແລະພົນທະຫານ, ຄົນໃນຄອບຄົວຂອງທະ-ຫານ, ຕຳຣວດ, ຂ້າຣາຊການ, ເພື່ອນຮ່ວມຊາດແລະໝູ່ຄູ່ທີ່ເປັນຝຣັ່ງ. ໄລ່ສະເລັ່ຽແລ້ວ ປະມານ ໕໐໐ ຄົນ. ສິ່ງສຳຄັນທີ່ສຸດເທື່ອນີ້ຄື ມີທ່ານຜູ້ອາວຸໂສໄດ້ມາຮ່ວມຫຼາຍກວ່າ ຖ້ຽວຜ່ານໆມາ. ຫວັງວ່າຊຸດຕໍ່ໆໄປ ມິຕພາບທະຫານລາວ ຄົງສາມາດ

## ສູນສັມມາໃນລາວ

ມີສູນ :

- ວຽງໄຊ
- ຜົ້ງສາລີ
- ສວັນນະເຂດ
- ອັຕປື

ສູນສັມມາເປັນບ່ອນດັບເຊື້ອລາວ, ດັບຄົນລາວຜູ້ມີຄວາມສາມາດ, ຄວາມກ້າຫານແລະດັບຜູ້ມີຄວາມຮັກຊາດ.

**ແກວດີຕໍ່ ລາວ ຢູ່ບ່ອນໃດ?**

ລາວແກວ ຮ່ວມມືປະຫັດປະຫານຄົນລາວດ້ວຍກັນ. ພວກເຂົາກຳລັງຍົກປະເທດລາວໃຫ້ແກວ. ລູກແກວຢູ່ໃນຣັຖບານລາວ ທະວີຄູນຂຶ້ນນັບມື້. ລູກຄົນລາວຫາຍໄປໃສໝົດ?

ວຽດນາມໄດ້ຍຶດເອົາ ສາຍທາງໂຮ້ຈິມິນ/Piste Hochiminh ທີ່ຢູ່ໃນລາວ ໄປເປັນຂອງມັນແລ້ວ ພ້ອມດ້ວຍພູຫຼວງ (ສາຍພູແດນແກວ). ຄົນລາວຜູ້ໃດບໍ່ໄດ້ຮຽນຈາກວຽດນາມ, ຣັຖບານຈະບໍ່ໃຫ້ໜ້າທີ່ດີ. ດ້ວຍເຫດນີ້ ຣັຖບານວຽດນາມຈິ່ງ "ຊ່ວຍເຫຼືອ" ການກໍ່ສ້າງໂຮງຮຽນວຽດຂຶ້ນຢູ່ວຽງຈັນ ອັນໃຫຍ່ກວ່າທຸກໆໂຮງຮຽນໃນລາວ. ພາສາບອກຊາດ. ຫາກວ່າ ຣັຖບານວຽດນາມຢາກຊ່ວຍລາວແທ້ ເປັນຫຍັງບໍ່ຊ່ວຍສ້າງໂຮງຮຽນລາວຂຶ້ນ?

ຢາກດັບຊາດ ຕ້ອງຄ່ອຍດັບພາສາໄປກ່ອນເທື່ອລະນ້ອຍໆ



Médaille Militaire N°1
(19xx)

(http://laos.luangprabang.free.fr)

## ຄວາມປອດພັຍ

ສະຖານທູດລາວທຸກໆແຫ່ງ ຕ້ອງມີຄົນຂອງພວກລາວແກວ ເປັນຜູ້ຄຸມຢູ່ສເມີ. ສ່ວນມາກພວກນີ້ ບໍ່ແມ່ນຄົນລາວ, ເຂົາປາກລາວ ແຕ່ຫົວຂອງມັນບໍ່ເປັນລາວ.

ການທີ່ເອົາຊື່ເອົາຮູບລົງໃນສິ່ງໃດສິ່ງນຶ່ງ ອັນຄົນອື່ນສາມາດຮູ້ເຫັນໄດ້ຈະເປັນໄພແກ່ຜູ້ມີຊື່ມີຮູບສເມີໄປ ຖ້າເຮົາບໍ່ຄິດໄປໄກ.ສິ່ງເຫຼົ່ານີ້ຈະມີໄພໜ້ອຍໃນກໍຣະນີທີ່ຜູ້ກ່ຽວຈະບໍ່ກັບຄືນເມືອລາວອີກ ກັບ ຜູ້ມີອາຍຸສັງຂານສູງແລ້ວ. ປ້ອງກັນ ພວກໜຸ່ມນ້ອຍທີ່ຫ້າວຫັນ, ຄົນລາວທີ່ມີຫົວດີ, ກ້າຫານ ແລະ ຜູ້ຮັກຊາດເປັນໜ້າທີ່ຂອງຄົນລາວ ທຸກຄົນ. ລາວຮັກລາວ ຢ່າທໍາຣາຍລາວ.

ອັນນີ້ຈິ່ງປອດພັຍທັງເພິ່ນທັງໂຕ

# ປາກລາວຢູ່ ແຕ່ຫົວມັນບໍ່ເປັນລາວ

ຈັດພິທີພິເສດເພື່ອເປັນກຽດໃຫ້ແກ່ທ່ານຜູ້ອາວຸໂສທັງຫຼາຍ ໃຫ້ເຂົ້າທັນກັບເວລາ ແລະ ອາຍຸສັງຂານຂອງພວກທ່ານຜູ້ອະວຸໂສທຸກໆຄົນ, ຈິ່ງໄດ້ຂໍອະພັຍມານະໂອກາດນີ້.

ການທີ່ ມິຕພາບທະຫານລາວ ບໍ່ໄດ້ເອົາຮູບອອກໃສ່ໜັງສືນີ້ ເພາະວ່າທາງຄນະເຮົາບໍ່ໄດ້ຂໍອະນຸຍາດຈາກຜູ້ເຂົ້າຮ່ວມງານໃນມື້ວັນທິດທີ ໒໕ ຜ່ານມານີ້. ຖ້າຫາກວ່າ ທ່ານຜູ້ໃດຢາກໃຫ້ເອົາຮູບອອກໃນໜັງສືນີ້ ຂໍໃຫ້ທ່ານສົ່ງໃບອະນຸຍາດ ໄປໃຫ້ບັນນາທິການຂອງເຮົາດ້ວຍ, ຈະເປັນພຣະຄຸນຢ່າງສູງ ແລະ ຂໍຂອບໃຈ ໄວ້ລ່ວງໜ້າ.



Médaille Militaire N°3
(19xx)

ຈັດວັນ "໒໓ ມີນາ" ຂຶ້ນເພື່ອໃຫ້ເຫັນວ່າ ໑, ນັບຕັ້ງແຕ່ລາວໄດ້ຮັບເອກຣາດຈາກຝຣັ່ງມາ ເປັນເທື່ອທໍາອິດ ໃນປວັດສາດລາວ, ປະເທດນີ້/le Laos, ໄດ້ມີ ກໍາລັງທະຫານກອງທັບ ເປັນຂອງຕົນເອງ. ໜ້າເສັຽດາຍທີ່ ສປປລ ເອົາທະຫານວຽດ ເປັນທະຫານລາວ. ສອງມາ, ເພື່ອໃຫ້ເຫັນວ່າ ກໍາລັງກອງທັບແຫ່ງຊາດລາວ ແມ່ນ ກໍາລັງທະຫານຂອງຊາດລາວ (ປະກອບອາວຸດ), ຈະຢູ່ ໃນຣະບອບຜະເດັດການໃດໆ ເໝືອນດັ່ງຣະບອບ ສປປລ ຄູ່ມື້ນີ້ກໍຕາມ, ຕ້ອງໃຫ້ປະເທດລາວມີ ກອງທັບແຫ່ງຊາດເປັນຂອງຕົນເອງ ອັນມີຄົນລາວເປັນນາຍ-ເປັນຜູ້ບັງຄັບບັນຊາ ໃນຖັນແຖວການທະຫານ, ໃນກະຊວງ ແລະໃນກົມກອງທະຫານຕ່າງໆທົ່ວປະເທດລາວ ບັສຈາກການຍອມຮັບເອົາແກວມາເປັນນາຍ.

ຈັດວັນ "໒໓ ມີນາ" ຂຶ້ນບໍ່ໝາຍຄວາມວ່າ ຕົມ້າຕາຍໃຫ້ລູກແລ່ນ ແຕ່ໝາຍເຖິງວັນທີ່ປະເທດລາວເຮົາ ເຄີຍໄດ້ມີ ກອງທັບແຫ່ງຊາດເປັນຂອງຕົນເອງ ໑ ແລະ ເພື່ອເປັນວັນຣະນຶກເຖິງບຸນຄຸນຂອງທະຫານທຸກຄົນ ທີ່ໄດ້ລົ້ມເສັຽຫາຍຕາຍເສັຽຈາກໃນສນາມຣົບ ໑.

ພວກທະຫານດັ່ງກ່າວ, ຜູ້ມີຄວາມອາດຫານ, ຈະເປັນທະຫານແນວລາວຫຼືທະຫານກອງທັບ ກໍເປັນລາວເໝືອນກັນ. ວັນ ໒໓ ມີນາເປັນວັນທີ່ພວກວຽດຕ້ອງການລຶບອອກຈາກຈິດໃຈຄົນລາວ. ຟັງຄວາມແກວເສັຽແນວເຂົ້າປູກ : ໄຫດໍາໄຫແດງດັບໄປຍ້ອນແກວ.

# ຫົວເປັນແກວ ແອວເປັນລາວ

ເຂົາທໍາຣາຍການສຶກສາຂອງລູກລາວຫຼານລາວ; ເກົ້າລ້ານກັບຕໍ່ປີ ຄືຄ່າຈ້າງເຂົ້າຮຽນດົງໂດງ ໂດຍບໍ່ມີການໄລ່ຄ່າຢູ່ຄ່າກິນ. ເຂົາທໍາຣາຍສຸຂພາບ ເພາະເຂົາເອົາຢາ ໂຟຼຣິດອນ ໃສ່ໃນເຫຼົ້າໃສ່ໃນເຄື່ອງດື່ມ (ຣັຖບານຮູ້ເຣື່ອງນີ້ດີ), ເຂົາທໍາຣາຍອະນາຄົດ ຂອງ ລູກລາວຫຼານລາວ ເພາະເຂົາເອົາລູກແກວ ເປັນຂ້າຣາຊການ, ໄລ່ລູກລາວໄປເປັນແມ່ຈ້າງແລະໄປເຮັດການຢູ່ເມືອງໄທຍ໌. ນີ້ຄືເປົ້າໝາຍຂອງແກວ.



ຊ່ວຍກັນປົດແອກອອກຈາກແກວ ຄົນລາວທຸກຄົນຈົ່ງມີສະຕິ



Médaille Militaire n°2

ແກວກຳລັງກືນກິນລາວ. ຢູ່ໃນສະພາທີ່ວ່າການຕ່າງໆຂອງລາວ ຕ້ອງແມ່ນແກວທັງນັ້ນເປັນຜູ້ບົ່ງການ. ລາວແກວ ໝາຍເຖິງ ພວກຄົນລາວກຸ່ມນຶ່ງທີ່ຮັບໃຊ້ແຜນການແກວກືນກິນລາວ ຢ່າງບໍ່ຮູ້ສຶກຕົວກັບພວກຫົວເປັນແກວແອວເປັນລາວ. ພວກນີ້ມີ ທັງລາວ ທັງຂ້າ ທັງແມ້ວ ທັງແກວ ມີຮອດທັງເຈັກ. ຈຳນວນ ຄົນລາວແທ້ໃນສູນກາງແຫ່ງອຳນາດແລະຜູ້ມີອຳນາດອັນແທ້ຈິງອຳນາດສູງສຸດ ໃນທີ່ວ່າການອັນສຳຄັນໆຈະມີນ້ອຍ. ເຂົາເວົ້າລາວຮອດບໍ່ຂອດ!



1er Bataillon de Parachutistes lao

(19xx)

## ເສິກ ສົງຄາມ

ສົງຄາມທັມດາ ຄືເອົາກຳລັງຄົນກັບພະລັງຍຸດໂທປະກອນເປັນພື້ນຖານ ໃນການທຳຣາຍເປົ້າໝາຍທີ່ເປັນສັນຍາລັກຊາດພ້ອມດ້ວຍອຸສຫະຕ່າງໆ ເພື່ອເຮັດໃຫ້ ທີ່ວ່າການອຳນາດທົ່ວໄປ (ຜບ) ເປັນອັມພາດ ຫຼື ອ່ອນເພ້ຽລົງ (Paralysie du centre de commandement de l’adversaire), ຕົວຢ່າງ ສົງຄາມໂກນພ໌ (la guerre du Golfe). ແຕ່ວ່າ ໂຕໂປສຳຄັນໆ ໓ ຢ່າງໃນສົງຄາມສື່ສານ ມີຄື ເສິກເພື່ອສື່ສານ, ເສິກດ້ວຍສື່ສານ ແລະ ເສິກຕ້ານສື່ສານ ຈະມີໂສມໜ້າແບບໃໝ່ (Guerre Pour, Par et Contre l’information). ເສິກເພື່ອສື່ສານ ຄືກິຈການໆ ສືບ/ສອດແນມ/ຊອກຫາ ເພື່ອລັກລອບເອົາຂ່າວ. ເສິກດ້ວຍສື່ສານ ຄືເສິກສ້າງຂ່າວ ດ້ວຍການປ່ອຍຂ່າວ ແລະ ດ້ວຍການປ້ອນຂ່າວ ສຳລັບການຫຼອກລວງ, ການຈອບອອຍ, ການຍຸຍົງໃຫ້ "ຄົນໃນຊາດ" ຜິດກັນແລະເຮັດໃຫ້ຜູ້ນັບຖືຈາກປະຊາຊົນຂາດການເຊື່ອຖື (ສຸພານຸວົງບໍ່ມີຫຍັງ, ໄກສອນ ມີສິດທຸກຢ່າງ ຍ້ອນມັນເປັນລູກແກວ); ເວົ້າໄດ້ອີກຢ່າງນຶ່ງວ່າ ສົງຄາມຈິຕສາດ, ແກວຫຼິ້ນລະຄອນເພື່ອກ່ອມໃຫ້ລາວນອນຫຼັບປິ້ງ. ເສິກຕ້ານສື່ສານ ເປັນເສິກທີ່ມີແນວທາງອັນແນໃສ່ການທຳຣາຍເປັນໃຫຍ່, ທຳຣາຍແຫຼ່ງສື່ສານເພື່ອຕ້ານການສ້າງສື່ສານ (ປ່ອຍ ໄວຣັສ/virus ໄປທຳຣາຍ ). ສລຸບແລ້ວ, ເສິກສື່ ຫຼື ສົງຄາມສື່ສານ (ສື່ເສິກ/ເສິກສື່ເໝືອນເສິກປາກເສິກທ້ອງ) ເປັນສົງຄາມທຳຣາຍລ້ວນໆ.

ທຸກໆສົງຄາມ ຄືເອົາສື່ສານເປັນໃຫຍ່ ໃນການປະຕິບັດງານ ຕາມຄຳສັ່ງ ແລະໜ້າທີ່, ເຖິງແມ່ນວ່າ ຄຳສັ່ງນັ້ນ ອາດຈະຖືກດັດແປງຈາກຜູ້ໃດຜູ້ນຶ່ງກ່ອນແລ້ວ ກໍເປັນໄດ້, ກ່ອນ

## ສິດເສຣີພາບຂອງລູກລາວຫຼານລາວເດ ຢູ່ໃສ

ຕາມຊາຍແດນ ແມັກຊິໂກ-ສະຫາຣັດອະເມຣິກາ, ຣັຖບານ ອະເມຣິກາ ໄດ້ຈ່າຍເງິນອັນຫຼວງຫຼາຍ ເພື່ອຈ້າງເຂົາເຮັດຮົ້ວກັນຕ້ານພວກແມັກຊິແກນລັກເຂົ້າເມືອງ. ສາຍພູຫຼວງ/chaîne annamitique ເປັນພູໃຫຍ່ແລະສູງອັນມີຄວາມຍາວແຕ່ເໜືອຈົນເຖິງອັຕປື. ພ້ອມໆຽວກັນນັ້ນ ເສັ້ນພູສາຍນີ້ ຍັງເປັນຮົ້ວທັມຊາດທີ່ສາມາດຂວາງກັ້ນ ການຮຸກຮານຂອງພວກວຽດນາມ ແລະພວກເຂົ້າເມືອງເຖື່ອນອີກດ້ວຍ ໂດຍການລົງທຶນພຽງເລັກນ້ອຍກໍພຽງພໍກັບຄວາມຕ້ອງການ. ອີກປະການນຶ່ງ, ສາຍທາງໂຮ້ຈິມິນ ກໍຕັ້ງຢູ່ໃນລາວ. ໃນເມື່ອ ສາຍທາງເສັ້ນນີ້ກາຍໄປເປັນຖນົນແຫ່ງຊາດຂອງວຽດນາມ ທຸກສິ່ງຢ່າງທັງໝົດທີ່ຕັ້ງຢູ່ໃນຣະຫວ່າງເສັ້ນທາງແລະເສັ້ນພູນັ້ນ ກໍກາຍໄປເປັນຂອງວຽດເໝືອນກັນ. ຈັ່ງໃດ ຈິ່ງວ່າແກວບໍ່ກືນກິນລາວ? ແກວຕັດໄມ້ລາວໄດ້ ລາວຕັດບໍ່ໄດ້, ມີສິດໄດ້ແຕ່ແນມເບິ່ງ.

ວຽດນາມໄດ້ຍຶດເອົາ ສາຍທາງໂຮ້ຈິມິນ /Piste Hochiminh ທີ່ຢູ່ໃນລາວໄປເປັນຂອງມັນແລ້ວ ພ້ອມດ້ວຍ ພູຫຼວງ (ສາຍພູແດນແກວ). ຄົນລາວຜູ້ໃດບໍ່ໄດ້ຮຽນຈາກວຽດນາມ ບໍ່ສາມາດເຮັດການນຳຣັຖບານໄດ້. ດ້ວຍເຫດນີ້ ຣັຖບານວຽດນາມຈິ່ງມາ "ຊ່ວຍເຫຼືອ" ກໍ່ສ້າງໂຮງຮຽນວຽດຂຶ້ນຢູ່ວຽງຈັນ ທີ່ໃຫຍ່ກວ່າທຸກໆໂຮງຮຽນໃນລາວ. ພາສາບອກຊາດ. ຫາກວ່າ ຣັຖບານວຽດຢາກຊ່ວຍລາວແທ້ ເປັນຫຍັງບໍ່ຊ່ວຍສ້າງໂຮງຮຽນລາວຂຶ້ນ? ກົດໝາຍປະກັນການເປັນຢູ່ກັບອະນາຄົດລູກລາວຫຼານລາວຢູ່ໃສ?

# ແກວເຮັດໄດ້ ລາວເຮັດໃບ້

ມັນຈະໄປເຖິງມືຂອງພະນັກງານຜູ້ກ່ຽວຂ້ອງ. ໃນບັ້ນນີ້ ເຮົາບໍ່ກ່າວເຖິງວິທີແລະວິທີການໆປະຕິບັດງານ ໃຫ້ຫຼ້ອນໜ້າທີ່. ຖ້າຫາກວ່າ ຜູ້ໄດ້ຮັບພາຣະໜ້າທີ່ກ່ຽວຂ້ອງເຮັດສຸດຍຽດ ຕາມຄວາມສາມາດ, ຕາມຄຳສັ່ງ ຫຼືຕາມໃຈຂອບຂອງຜູ້ກ່ຽວ, ສ່ວນຫຼາຍ ເປົ້າໝາຍມັກຈະຖືກທຳຮາຍຢູ່ສເມີ (ພິໄນກັມຂອງ ໂຮ້ຈິມິນ ສັ່ງໄວ້ວ່າ ໃຫ້ຍຶດເອົາລາວກັບຂເມນແລ້ວສ້າງເປັນອິນດູຈີນ, ເຮັດໃຫ້ເປັນປະເທດດຽວກັນຄືເປັນວຽດນາມ. ຄົນວຽດທີ່ປະຕິບັດໜ້າທີ່ນີ້ ຕ້ອງທຳຮາຍສິ່ງທີ່ເປັນສັນຍາລັກລາວ ກັບຄວາມເປັນລາວ. ຕົວຢ່າງ ແກວມີສິດ ເຂົ້າມາຕັ້ງຖິ່ນຖານ ໃນລາວກັບກາຍເປັນລາວ ເພາະຖືບັສບໍລາວໄດ້ ຍ່າງບໍ່ຂໍສັນຊາດ. ແກວເຮັດຫຍັງໄດ້ໝົດຢູ່ລາວ, ຕັດໄມ້ກະໄດ້, ປຸກເຮືອນໃສ່ດິນຕອນໃດກະໄດ້ຍ່າງບໍ່ມີການຂໍ້. ແຕ່ວ່າ ຄົນລາວແທ້ທີ່ກັບຈາກເມືອງນອກເພື່ອເມືອຕັ້ງຖິ່ນຖານຢູ່ບ້ານເກີດເມືອງນອນຂອງຕົນ ຢາກຂໍດິນປຸກເຮືອນ ຍັງບໍ່ມີຮອດສິດຂໍ້ຂໍ້າ! ແກວເຮັດທຸກຍ່າງ ເພື່ອສ້າງຄວາມວຸ້ນວາຍໃຫ້ລາວຊັງກັນ, ໃຫ້ລາວຟັນລາວ. ໂພດເກີນໄປແລ້ວ). ດັ່ງນັ້ນ ເພິ່ນຈິ່ງວ່າ ສື່=ອຳນາດ ແຕ່ບໍ່ໝາຍຄວາມວ່າ ມີອຳນາດແລ້ວ (Information=Pouvoir) ຈະເປັນຜູ້ຮູ້ຫຼາຍ. ແຕ່ວ່າ ການຮູ້(ສື່)ຫຼາຍ ສາມາດຊ່ອຍການຕັດສິນໃຈ ໃຫ້ກົງກັບຄວາມຕ້ອງການພ້ອມດ້ວຍຄວາມຫວັງ ໄດ້ຍ່າງວ່ອງໄວ; ເວົ້າໃຫ້ຄົນຮັກຄົນຊັງກັນກະໄດ້ດີ.

ເທັກນິກແລະວິທີຕ່າງໆໃນການເຮັດເສິກໄດ້ຖ່າຍທອດໄປເຂົ້າໃສ່ຣະບົບເສຖກິດ. ເສິກສື່/ສື່ສົງຄາມ ໄດ້ກາຍໄປເປັນບໍ່ເກີດແຫ່ງ ປັນຍາເສຖກິດ (L'intelligence économique) ຈົນຫັນມາເອົາ ທິສດີທະຫານໃນການທຳສົງຄາມສື່ສານ ໄປໝູນໃຊ້ເປັນທິສດີເສຖກິດ (ວິທີທາງ=ແນວທາງ, ເສັ້ນທາງ).

**Lobbying** = traitement des agents par influence. **Coach** = influence au niveau des grands groupes. **Reverse engineering** = on démonte un produit pour l'étudier et l'améliorer. **Benchmarking** = on dresse un étalonnage d'un secteur d'activité, d'un produit, d'un processus et on étudie le meilleur. **Technoglobalisme** = concept reposant sur la maîtrise japonaise en matière de technologie de l'information, en liaison avec le MITI (bourse de renseignement japonaise).

http//www.infowar.com http//www.infoguerre.com

ຄນະກັມການວັນຄະດີໄດ້ເອົາຂັ້ນທະຫານພິມລົງໃນວັນຄະດີສານສະບັບທີ໕ ບີທີ໒ ເດືອນມີນ ພຸທສັກຣາດ ໒໔໙໗ ກົງກັບເດືອນ Mars 1954, ຕາມຈົດໝາຍບັນທຶກ ເລກທີ ໓໕-໓໖ ລົງ ວັນທີ ໘, ໑໑ ແລະ ໑໖ ເດືອນ ຊັງວິເຍ ໑໙໕໔, ຮຽບຮຽງໂດຍຄນະກັມການທະຫານລາວ ແລະ ພິມໂດຍ ກະຊວງສຶກສາທິການ, ອັນມີດັ່ງຕໍ່ໄປນີ້ (ບັ້ນ ໑):

໑- ຍອດຊຸມພົນ/Maréchal
໒- ຊຸມພົນເອກ/Général d'Armée
໓- ຊຸມພົນໂທ/Gal. de Corps d'Armée
໔- ຊຸມພົນຕຣີ/Gal. de Division
໕- ຊຸມພົນຈັດວາ/Gal. de Brigade

໖- ສັກທ້າ/Colonel
໗- ຮອງສັກທ້າ/Lt-Colonel
໘- ສັກສີ່/Commandant
໙- ສັກສາມ/Capitaine
໑໐- ສັກສອງ/Lieutenant (Lt)
໑໑- ສັກນຶ່ງ/Sous-Lieutenant
໑໒- ຮອງສັກນຶ່ງ/Aspirant

໑- ນາຍໝູ່ເອກ/Adjudant-Chef
໒- ນາຍໝູ່ໂທ/Adjudant
໓- ນາຍໝູ່ຕຣີ/Sergent Major
໔- ນາຍໝວດເອກ/Sergent-Chef (Maréchal de Logis Chef)
໕- ນາຍໝວດໂທ/Sergent (Maréchal de Logis)
໖- ນາຍໝວດຕຣີ/Caporal-Chef (Brigadier-Chef)
໗- ນາຍໝວດຈັດວາ/Caporal (Brigadier)
໘- ທະຫານຂັ້ນນຶ່ງ/1ème Classe
໙- ທະຫານຂັ້ນສອງ/2ème Classe

ນາຍຣ້ອຍ/ນາຍຮ້ອຍ, ພໍ່ຄ້າ ຜູ້ນຳເອົາຝູງຄວາຍງົວໄປຂາຍຢູ່ຕ່າງປະເທດ.

ຈອມພົນ, ນາຍພົນ, ນາຍຮ້ອຍ ແຕ່ບໍ່ເຫັນເພິ່ນຮ້ອງນາຍພັນ. ເພິ່ນມັກວ່າ ພັນຕຣີ, ພັນໂທ ກັບ ພັນເອກ.

ຂອບໃຈທຸກໆທ່ານ ທີ່ໄດ້ເສັຽສລະອ່ານ ແລະ ໄດ້ໃຫ້ຄວາມແນະນຳ ໃນການອອກລວດລາຍການຂຽນ, ການລຽນຄຳສັບທີ່ມີຄວາມໝາຍຄ້າຍຄືກັນ ກັບຄຳສັບຝຣັ່ງ.

# ລາວເປັນນາຍ ພົ້ດໃຫ້ແກວບົ່ງການ

## ຮັກຊາດ

ຮັກຄວາມເປັນລາວ ຮັກຄົນທີ່ເປັນລາວແທ້ ຮັກຄົນທີ່ເປັນລາວເໝືອນກັນກັບຕົນເອງ ແລະ ຊ່ອຍເຫຼືອລາວ. ຄຳວ່າ ລາວ ມີຄວາມໝາຍແນວໃດ ?

STRATEGIC INFORMATION WARFARE – A New Face of War
Roger C. Molander, Andrew S. Riddile, Peter A. Wilson. Prepared for the Office of the Secretary of Defense - "National Defense Research Institute (US)" - ISBN 0-8330-2352-7 (alk. paper) – 1996 RAND.
Internet: order@rand.org
Phone: (310) 451-7002; Fax: (310) 451-6915.

# ບຸນຮົດນ້ຳ ຕາມຮີດ ໑໖

ຮີດ ໑໖ ແມ່ນຣາຍການໆຈັດຕັ້ງບຸນຕາມປະເພນີລາວ ດ້ວຍການເຮັດບຸນ ໑໖ ເທື່ອຕໍ່ປີແລະເດືອນນຶ່ງເທື່ອນຶ່ງ. ຄອງ ໑໔ ແມ່ນ ວິທີແລະວິດີການໆປົກຄອງເມືອງ ຕາມແຜນບູຮານ. ບຸນຮົດນ້ຳຕົກຖືກເດືອນຫ້າ. ປີ ພສ ໒໕໔໙ ຕົກໃສ່ເດືອນຫົກເພັງ ອັນຕໍ່ກັບ ວັນດັບຂັນທ໌ປະຣິນິບພານ ຂອງພຣະພຸທເຈົ້າ. ແນ່ນອນວ່າ ກ່ອນຈະໃຊ້ພຸທສັກຣາດ ລາວເຄີຍໄດ້ໃຊ້ປະຕິທິນໂບຮານ (ກາບໃຈ້, ຮັບເບົ້າ...). ໃນເມື່ອປູ່ມມາໃຊ້ຈຸລສັກຣາດ ເພິ່ນຍ້າຍພຽງແຕ່ວັນປີໃໝ່, ຊຶ່ງເປັນວັນຂຶ້ນ ໑ ຄ່ຳຂອງເດືອນອ້າຍ, ມາເປັນວັນປີໃໝ່ ໃນເດືອນ ເມສາ ຕອນທີ່ຕາເວັນ ເຄື່ອນຈາກຣາສີເມດມາເປັນຣາສີມີນ ຕາມສຸຣິຍະຄະຕິ. ດ້ວຍເຫດດັ່ງກ່າວນີ້ ວັນສັງການຂຶ້ນ ຈຶ່ງຕົກຢູ່ໃນຣະຫວ່າງ ເດືອນຫ້າຂຶ້ນ ໓ ຄ່ຳ ກັບເດືອນຫົກຂຶ້ນ ໕ ຄ່ຳ ຕາມຈັນທະຄະຕິ ອັນຜິດປົກກະຕິໄປເລີຍ. ຕາມປົກກະຕິ, ມື້ເລີ້ມຕົ້ນປີໃໝ່ (ວັນສັງຂານຂຶ້ນ) ແມ່ນເດືອນຈຽງຂຶ້ນ ໑ ຄ່ຳ ຍ້ອນວ່າ ເດືອນຈຽງເປັນເດືອນອ້ຽ ໃນປະຕິທິນລາວຈັນທະຄະຕິ, ໝາຍຄວາມວ່າ ເພິ່ນຕັ້ງເດືອນຈຽງເປັນ ເດືອນທີນຶ່ງ. ຈົນກໍປູ່ມປີໃໝ່ມາໃສ່ເດືອນສາມຂຶ້ນ ໑ ຄ່ຳ. ຂຶ້ນ ໑ ຄ່ຳຢູ່ໃນປົກກະຕິ, ອັນເປັນຂອງທັມດາ. ສລຸບແລ້ວ ຖ້າເຮົາບໍ່ເຂົ້າໃຈວ່າ ການບັນທຶກໜັງສືທີ່ເຮົາອ່ານຢູ່ນັ້ນ ເພິ່ນໃຊ້ສັກຣາດໃດກັນແທ້ (ພຸທສັກຣາດ, ມະຫາສັກຣາດ, ຈຸລສັກຣາດ), ຜົນການ ຄົ້ນຄວ້າ ກໍຈະຜູ່ມໄປເໝືອນກັນ; ຂາດຄວາມແນ່ນອນ.

ກ່ອນອື່ນໝົດ ຢ່າລືມວ່າ ບຸນຮົດນ້ຳ ເປັນບຸນເດັກນ້ອຍ, ເລີ້ມຈາກການສະສາງເຮືອນຊານບ້ານຊ່ອງໃຫ້ສະອາດ, ຄົນໃນຄອບຄົວພາກັນເຕົ້າໂຮມຜູກຂໍ່ຕໍ່ແຂນ ແລະອວານຂວັນ, ຈະເປັນພອນປາກ ຫຼື ພອນວັດຖຸ ກໍສຸດແລ້ວແຕ່ຈິດໃຈ ແລະ ຄວາມສາມາດ, ຕາມທີ່ໄດ້ປະຕິບັດກັນມາ.

ເວົ້າວ່າບຸນຮົດນ້ຳກັບບຸນປີໃໝ່ຄວບກັນໄດ້ ກໍຕໍ່ໃນເມື່ອເຮົາຖືວ່າ ປີໃໝ່ນັ້ນເປັນປີໃໝ່ແຫ່ງຈຸລສັກຣາດ ຕ່າງຫາກ, ແຕ່ຫາກວ່າ ເຮົາກັບມາໃຊ້ປະຕິທິນ ແຫ່ງພຸທສັກຣາດ ຊຶ່ງໄດ້ກ່າວໄວ້ແລ້ວຢູ່ຂ້າງເທິງນີ້. ສະນັ້ນ ມື້ ສັງການຫຼືສັງຂານບໍ່ແມ່ນບຸນປີໃໝ່ຂອງພຸທສັກຣາດ.

ອັນວ່າ ບຸນຮົດນ້ຳກັບບຸນປີໃໝ່, ອັນໃດເປັນອັນໃດກັນແທ້, ໃຫ້ເຂົ້າໃຈວ່າ ບຸນຮົດນ້ຳເປັນຜົນງານຂອງການຍ້າຍບຸນປີໃໝ່ຈາກເດືອນອ້າຍມາໃສ່ເດືອນຫ້ານັ້ນເອງ ດັ່ງທີ່ຈາໄວ້ ໃນນິທານນາງສັງຂານວ່າ (ບ. ທັມມະປາລະ, ທັມບາລ):

ມີຄົນບ້ານໃກ້ເຮືອນຄຽງສອງຄົນ, ຜູ້ເປັນເສດຖີບໍ່ມີລູກ ແລະຜູ້ຂີ້ເຫຼົ້າມີລູກສອງຄົນ. ຂີ້ເມົາຜິດກັບເສດຖີ ເລີຍເວົ້າວ່າ "ມີແຕ່ເງິນທັ້ນລ໋ະ ລູກບໍ່ມີ ບາດວ່າຕາຍໄປ ແມ່ນໃຜຈະມາສືບຕໍ່ ?" ຄຳເວົ້າຄຳນີ້ເຮັດໃຫ້ເສດຖີຄິດຢູ່ບໍ່ເຊົາ, ຈຶ່ງສັ່ງໃຫ້ບໍຣິວານທັງຫຼາຍ ເອົາເຄື່ອງໄປວາງໄວ້ຢູ່ກ້ອງຕົ້ນໄຮໃຫຍ່ ເພື່ອໄປບະຂໍລູກ. ຕໍ່ມາ, ເມັຽເສດຖີກໍໄດ້ຖືພາແລະຄອດລູກອອກເປັນຜູ້ຊາຍ ມີນາມວ່າ ທັມປາລະ. ທັມບາລກຸມານ ໄດ້ຮຽນຮູ້ຫຼາຍສິ່ງຢ່າງພ້ອມທັງພາສານົກ ເມື່ອອາຍຸຕົນໄດ້ ໗ ຂວບ ຈົນເຮັດໃຫ້ກະບິລມະຫາພົມສະເດັດລົງມາທົດລອງຄວາມຮູ້ຂອງເດັກ ແລະໄດ້ຮັບປາກວ່າ ຖ້າເດັກຜູ້ນີ້ສາມາດຕອບບັນຫາສາມຂໍ້ໄດ້ ມະຫາພົມຈະຕັດຄໍຕົນເພື່ອບູຊາທັມບາລະ, ຖ້າຕອບບໍ່ໄດ້ ຂໍໃຫ້ກຸມານຕັດຄໍຕົນຖິ້ມເສັຽ. ໄດ້ຍິນດັ່ງນັ້ນ, ທັມບາລະ ຂໍຜັດເຈັດວັນຈຶ່ງຈະໃຫ້ຄຳຕອບ. ມື້ແລງຖ້ວນ ໓ ທັມບາລກຸມານກໍຍັງແກ້ບັນຫາບໍ່ໄດ້ຈັກຂໍ້ ກໍເກີດວຸ້ນວາຍອຶກກະທຶກຂຶ້ນໃນໃຈ, ເລີຍໄປຊ່ອນລີ້ຢູ່ ກ້ອງຕົ້ນຕານ ອັນມີນົກອິນຊີຄູ່ນຶ່ງກຳລັງລົມກັນຢູ່ໃນຮັງວ່າ "ມື້ອື່ນຈະໄປຫາກິນຢູ່ໃສອ້າຍ?- ໂອ໊ຍ, ນ້ອງເອີຍ! ບໍ່ຕ້ອງເປັນຫ່ວງເຣື່ອງນີ້ດອກນ້ອງ ເພາະວ່າ ຈະໄດ້ກິນຊາກສົບ ຂອງທັມບາລກຸມານ - ອ໊າວ! ເປັນຫຽັງອ້າຍຈັ່ງວ່າຊັ້ນ - ເພາະວ່າທັມບາລກຸມານ ຕອບບັນຫາຍັງບໍ່ໄດ້ເທື່ອ - ບັນຫາອີ່ສັງອີກແລ້ວລ໋ະອ້າຍ - ງ່າຍໆດອກນ້ອງເອີຍ, ນອນສ໋ະ ເພື່ອເອົາແຮງໄວ້ມື້ອື່ນ - ໂອ໊ຍ ອ້າຍອັນນີ້! ກະບອກນ້ອງກ່ອນສ໋ະ, ນ້ອງຈັ່ງຊິນອນຫຼັບດີຢູ່ທາງຂ້າງອ້າຍ". ໃນເມື່ອເປັນດັ່ງນັ້ນ

# ບຸນຮົດນ້ຳ ຕາມຮີດ ໑໒

ອິນຊີຜູ້ຜົວ ເລີຍເລົ່າສູ່ອິນຊີຜູ້ເມັຽຟັງ ແລະໃຫ້ຄຳຕອບວ່າ: ໑-ຍາມເຊົ້າ ສິຣິຢູ່ໜ້າ. ສະນັ້ນ, ຄົນທັງຫຼາຍຈິ່ງເອົານ້ຳສວ່າຍໜ້າ. ໒-ຍາມທ່ຽງ ສິຣິຢູ່ເອິກ. ສະນັ້ນ, ຄົນທັງຫຼາຍຈິ່ງເອົານ້ຳລູບເອິກ. ໓-ຍາມແລງ/ຍາມຄ່ຳ ສິຣິຢູ່ຕີນ. ສະນັ້ນ, ຄົນທັງ-ຫຼາຍ ຈິ່ງເອົານ້ຳລ້າງຕີນ (ສິຣິ=ມຸງຄຸນ. ສີສີ/ສຣີ-ສຣີ).

ຕອນເຊົ້າຂອງວັນຖ້ວນເຈັດ, ທັມບາລກຸມານ ຕອບບັນຫາ ສາມຂໍ້ໄດ້ຢ່າງບໍ່ຄາຈັກດີ້ ອັນນຳຄວາມໂສກເສົ້າສລົດໃຈແກ່ ກະບິລະ. ກະບິລມະຫາພົມ ຈິ່ງຮຽກລູກສາວທັງເຈັດເຂົ້າເຝົ້າ ເພື່ອເລົ່າເຫດການສູ່ຟັງ ແລະໄດ້ສັ່ງຄຳເດັດຂາດ ຕໍ່ລູກສາວທັງເຈັດໄວ້ວ່າ"ໃນເມື່ອຄໍພໍ່ຖືກຕັດໄປແລ້ວ,ຖ້າຫົວຂອງພໍ່ຕົກນ້ຳ ແມ່ນ້ຳແລະດິນຟ້າອາກາດທັງຫຼາຍຈະແຫ້ງແລ້ງ. ຖ້າຫົວພໍ່ຕົກດິນ, ໄຟຈະໄໝ້ແຜ່ນດິນໝົດເສັຽ ຂໍໃຫ້ພວກລູກເອົາຂັນມາຮັບເອົາຫົວພໍ່ໄວ້ເດີ" (ບ. ກະບິລະ).

ດ້ວຍເຫດດັ່ງກ່າວນີ້, ບຸນປີໃໝ່ ຈຸລສັກຣາດ ແຕ່ລະປີຈິ່ງມີການຮົດນ້ຳຕລອດມາ, ເຮົາກໍຮ້ອງກັນວ່າບຸນຮົດນ້ຳມາ, ຈົນຮອດທຸກວັນນີ້. ແຕ່ລະປີໃດ ເທວີທັງເຈັດ, ຊຶ່ງເປັນລູກພຣະພົມ, ກໍຜຽນເມນກັນ, ປີລະຄົນ, ລົງມາເຊີນເອົາຫົວພໍ່ຂອງຕົນສົງນ້ຳ ແລະ ແຫ່ອ້ອມເຂົາ ສຸເມນ ທຸກໆປີ. ອັນວ່າ ນາງສັງຂານ ທີ່ພວກເຮົາແຫ່ແຫນກັນ ແຕ່ລະປີນັ້ນ ແມ່ນການແຫ່ລູກສາວຂອງກະບິລພົມນັ້ນເອງ. ຊື່ນາງທັງເຈັດ, ຈາກລູກສາວກົກໄປຫາລູກສາວຫຼ້າ, ມີດັ່ງນີ້:

| | |
|---|---|
| ໑- ນາງ ທຸງສະເທວີ | ໔- ນາງ ມຸນທາ |
| ໒- ນາງ ໂຄຣາຄະ | ໕- ນາງ ກິຣິນີ |
| ໓- ນາງ ຣາກສະ | ໖- ນາງ ກິມິທາ |
| ໔- ນາງ ມຸນທາ | ໗- ນາງ ມະໂຫທອນ |

ຄຳຖາມ. ເປັນດ້ວຍເຫດໃດ ຈິ່ງມີແຕ່ເຈັດຄົນເທົ່ານັ້ນ? ຄິດວ່າ ອາທິດນຶ່ງມີແຕ່ເຈັດມື້. ໃນເມື່ອ ທ່ານຮູ້ດັ່ງນີ້ແລ້ວ, ຂໍທ່ານຊ່ວຍຜູ້ຊຽນຂອກຫາວ່າ ປີນີ້ ຊື່ນາງສັງຂານວ່າຢ່າງໃດ ແລະປີໜ້າ ນາງສັງຂານຈະຕົກໄປຖືກລູກສາວຜູ້ທີເທົ່າໃດ?

ອາຍຸ ວັນໂນ ສຸກຂັງ ພະລັງ.

- ອາຍຸ ຍືນຍາວໝັ້ນ ພັນປີໃຫ້ດັ້ນຮອດເດີ ລາວເຮົາເດີ,
- ວັນນະ ຄືສີແຈ່ມໃສ, ໄດ້ດັບໄດ້ດີ, ມີຄວາມຈະເຣີນ,
- ສຸຂ໌ ບັສຈາກທຸກ ຖ້າມີສຸກແລ້ວຂໍໃຫ້ສຸກຍິ່ງໆຂຶ້ນໄປ,
- ພະລະ ພະລັງມັງຂາ ສຸຂພາບແຂງແຮງດີ.

ໂຊກດີ ຈົ່ງເປັນຂອງທ່ານທຸກຄົນ.

| | |
|---|---|
| ພຸທສັກຣາດ | ຕັ້ງຂຶ້ນມື້ ພຣະພຸທເຈົ້າປະຣິນິບພານ + ວັນ ໑ (ຂອກເອົາເອງ). |
| ມະຫາສັກຣາດ | ຕັ້ງຂຶ້ນວັນພຸດ ເດືອນ ໕ ຂຶ້ນ ໑໑ ຄ່ຳ ປີເຖາະ (ກັດເໝົ້າ), ຫຼັງຈາກ ພຸທສັກຣາດໄດ້ ໖໒໒ ປີ. |
| ຈຸລສັກຣາດ | ຕັ້ງຂຶ້ນມື້ ວັນຈັນ ເດືອນ ໕ ຂຶ້ນ ໑໒ ຄ່ຳ ປີກຸນ (ກັດໃຄ້). ພ.ສ. ໑໑໘໒. ມະຫາສັກຣາດໄດ້ ໕໓໑, ກົງກັບວັນລາວທີ ໒໔ ມີນາ. |
| ວັນສັງຂານໄປ | ຫຼືສັງຂານລ່ວງ ເປັນວັນທີ່ປີຕາເວັນເດີນອ້ອມໂລກໄດ້ນຶ່ງຮອບພໍດີ, ໑ ປີຖ້ວນໆ. ຄືວ່າ ຈົບເດືອນທີ ໑໒ (ມີນ) ມາເລີ້ມຕັ້ງຕົ້ນປີໃໝ່ ໃນເດືອນທີນຶ່ງ (ເມສ໌). ສັງຂານໄປ ເປັນ ປີໃໝ່ແທ້ ຖ້າຈະເວົ້າຕາມຫຼັກໂຫຣະສາດ, ຕາມໂຄຈອນຂອງຕາເວັນ. |
| ວັນສັງຂານຂຶ້ນ | ເປັນວັນຕັ້ງຕົ້ນຂຶ້ນປີໃໝ່ຕາມປະເພນີ, ຕາມຈັນທະຄະຕິ. |
| ມື້ເນົາ/ວັນເນົາ | ເປັນວັນທີ່ຢູ່ຣະຫວ່າງກາງ ວັນສັງຂານໄປ ກັບ ວັນສັງຂານຂຶ້ນ. ຕາມປົກຕິມີມື້ດຽວ ແຕ່ບາງຄັ້ງມີສອງມື້, ຍ້ອນໂຄຈອນຊັກຊ້າ. |
| ສັງຂານ | (ສ. ສັງກຣານຕະ, ບ. ສັງກັນຕະ ແປວ່າ ກ້າວຂຶ້ນ). ສົງກຣານ ແຜງມາເປັນ ສັງຂານ ໄດ້ໃນເມື່ອ ກ ກັບ ຣ ຄວບກັນຕາມຫຼັກການ ແປງຄຳສັບ, ກຣ ກາຍເປັນ ຂ. |
| ຮີດ | (ຮີດ ໑໒ ຄອງ ໑໔ ຮີດຍີ່ຄອງຈຽງ). ຖ້າມາຈາກບາລີ ແມ່ນ ຣິຕະ ອັນແປວ່າ ປະເວນີ ແລະແຜງມາເປັນ ປະເພນີ. ຖ້າແມ່ນຮີດ ຄຳລາວ ຕ້ອງແມ່ນ ຮີດເພື່ອເຮັດໃຫ້ເປັນຄອງໃຫ້ເປັນລ່ຽມ. |
| ຄອງ | ຄອງຖນົນ (ຮ່ອງ), ຄອງສິບສີ່/ປົກຄອງ ແມ່ນຫາເຄື່ອງມາປົກຮ່ອງໄວ້ ເພື່ອບໍ່ໃຫ້ມັນລົ້ນອອກຈາກຄອງ, ໝາຍຄວາມວ່າ ເຮັດໃຫ້ມັນໄຫຼໄປຕາມຄອງ, ໄປຕາມຈຸດປະສົງ ຄວາມໝັ້ນຄົງຂອງປະເທດ-ຊາດ. ສ້າງຄວາມເປັນລາວ ເພື່ອໃຫ້ຊາດຈະເຣີນ. |

ເອກສານ :

໑-ໂຫຣະສາດລາວ - ເຈົ້າຣາຊພາຄີໄນຍ໌ ເພັຊຣາຊ - ກະຊວງສຶກສາທິການ, ຄສ ໑໙໗໓. ໒- ວັນຄະດີສານ ເດືອນມີນ ພຸທສັກຣາດ ໒໔໙໗ (ມາກສ໌ ໑໙໕໔) - ຄນະກັມການວັນຄະດີ - ກະຊວງສຶກສາທິການ. ໓- ໆລໆ.



Amicale des Militaires Lao
31 rue Messidor
77130 Cannes Ecluses – France
Daablao@yahoo.fr

ລາວມີປັນຍາ - ລາວສາມັກຄີລາວ - ລາວຈະເຣີນ